# ເຜີຍແຜ່-ເຊື່ອມຊຶມ ເອກະສານສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ V




ໃນຕອນບ່າຍວັນທີ 16 ກຸມພາ 2026 ທີ່ຫ້ອງປະຊຸມສະໂມສອນສະຖາບັນການທະນາຄານ, ຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່-ເຊື່ອມຊຶມ ເອກະສານສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ V ໂດຍການເປັນປະທານຂອງ **ສະຫາຍ ນ. ບຸນຄຳ ວໍລະຈິດ** ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ, ມີບັນດາສະຫາຍ ຄະນະປະຈຳພັກ-ຄະນະບໍລິຫານງານພັກ ທຫລ, ຄະນະໜ່ວຍພັກ-ຄະນະພັກຮາກຖານ ພ້ອມດ້ວຍສະມາຊິກພັກ-ພະນັກງານຫຼັກແຫຼ່ງ ເຂົ້າຮ່ວມ 486 ສະຫາຍ.

ກອງປະຊຸມໃນຄັ້ງນີ້ ຈັດຂຶ້ນເພື່ອເຮັດໃຫ້ຖັນແຖວສະມາຊິກພັກ-ພະນັກງານ ອ້ອມຂ້າງອົງຄະນະພັກ ທຫລ ໄດ້ຮັບຮູ້-ເຂົ້າໃຈ, ກຳແໜ້ນ ແລະ ເປັນເອກະພາບສູງຕໍ່ກັບເນື້ອໃນຈິດໃຈເອກະສານສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ V ເປັນຕົ້ນແມ່ນລາຍງານການເມືອງ, ແຜນພັດທະນາລະບົບສະຖາບັນການເງິນ-ເງິນຕາ ແລະ ເອກະສານຕິດພັນອື່ນໆ ເພື່ອພ້ອມກັນນຳໄປສືບຕໍ່ຜັນຂະຫຍາຍ ໃຫ້ເປັນແຜນງານ-ໂຄງການ ແລະ ວຽກຈຸດສຸມລະອຽດໃນແຕ່ລະດ້ານ.

ໃນຕອນທ້າຍ, ປະທານກອງປະຊຸມ ໄດ້ມີຄວາມເຫັນເນັ້ນໜັກໃຫ້ບັນດາສະຫາຍ ຄະນະພັກ-ຄະນະນຳທຸກຂັ້ນ ຈົ່ງເປັນເຈົ້າການຢ່າງແທ້ຈິງໃນການນຳເອົາເນື້ອໃນຈິດໃຈກອງປະຊຸມໃນຄັ້ງນີ້ ສືບຕໍ່ຈັດຕັ້ງເຜີຍແຜ່ໃຫ້ສະມາຊິກພັກ-ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໄດ້ເຊື່ອມຊຶມຢ່າງເລິກເຊິ່ງ ແລະ ແທດເຖິງກັບທຸກເປົ້າໝາຍ ເພື່ອເຮັດໃຫ້ເອກະສານສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ຄັ້ງທີ V ໄດ້ຮັບການຜັນຂະຫຍາຍເຂົ້າສູ່ພາກປະຕິບັດຕົວຈິງຢ່າງເປັນຮູບປະທຳ ແລະ ມີປະສິດທິພາບສູງ.





ກອງປະຊຸມ ໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ມີຜົນສຳເລັດຕາມລະດັບຄາດໝາຍທີ່ກຳນົດໄວ້ຢ່າງຈົບງາມ.

**ຂ່າວ-ພາບ: ຫ້ອງການ ທຫລ**

**ຢູ່ເມືອງລາວໃຊ້ເງິນກີບລາວ**